multicultural health communication

NSW GOVERNMENT Health

Laotian
[DOH-7105]

# ກາມະໂຣກຄລາມີເດັຍ
# Chlamydia

### ໂຣກຄລາມີເດັຍແມ່ນຫຍັງ?

ຄລາມີເດັຍແມ່ນການຕິດເຊື້ອໂຣກທີ່ຕິດຕໍ່ກັນທາງເພດ ຊຶ່ງສາມາດເກີດຂຶ້ນໄດ້ກັບທັງຊາຍແລະຍິງ. ໂຣກນີ້ເກີດມາຈາກເຊື້ອແບັກທີເຣັຽມ (bacterium). ມີຫຼາຍຄົນທີ່ຕິດເຊື້ອແບັກທີເຣັຽມແລ້ວແຕ່ບໍ່ອອກອາການຫຍັງ ແຕ່ກໍຍັງສາມາດແຜ່ພາຍເຊື້ອແບັກທີເຣັຽມໄດ້. ຄລາມີເດັຍສາມາດມີຜົນກະທົບຕໍ່ທໍ່ປັດສະວະ (ທາງເດີນປັດສະວະ), ເຊີວິກສ໌ (ປາກມົດລູກ), ລຳໄສ້ສຸດ ແລະ ທະວານ, ຮູຄໍ, ແລະ ຕາ. ການຕິດເຊື້ອຄລາມີເດັຍອາດເຮັດໃຫ້ມີອາການແຊກຊ້ອນຫຼາຍຢ່າງ, ແຕ່ວ່າເຮົາສາມາດປ້ອງກັນໂຣກນີ້ໄດ້.

### ເຮົາຕິດເຊື້ອຄລາມີເດັຍໄດ້ຢ່າງໃດ?

ຄລາມີເດັຍແຜ່ພາຍໂດຍການຮ່ວມເພດກັບຄົນທີ່ມີເຊື້ອນີ້ຢູ່ແລ້ວ. ຜູ້ທີ່ມີເປີເຊັນສູງໃນການຕິດເຊື້ອຄລາມີເດັຍແມ່ນ:

- ຊາຍໜຸ່ມແລະຍິງໜຸ່ມທີ່ມີການຮ່ວມເພດ;
- ຄົນທີ່ຫາກໍປ່ຽນຄູ່ຮ່ວມເພດໃໝ່;
- ຄົນທີ່ຫາກໍເປັນໂຣກຕິດຕໍ່ທາງເພດຊນິດອື່ນ.

### ຈະຮູ້ໄດ້ຢ່າງໃດວ່າເຮົາຕິດເຊື້ອຄລາມີເດັຍ?

ອາການອາດຈະເລີ້ມອອກພາຍໃນ 2–14 ມື້ຫຼັງຈາກຕິດເຊື້ອແລ້ວ. ຢ່າງໃດກໍດີ, ຄົນຜູ້ນຶ່ງອາດຈະມີເຊື້ອໂຣກຄລາມີເດັຍເປັນຫຼາຍໆເດືອນ, ຫຼື ອາດຮອດຫຼາຍໆປີ, ໂດຍທີ່ຕົນເອງບໍ່ຮູ້.

### ສຳລັບແມ່ຍິງ

ຖ້າແມ່ຍິງມີເຊື້ອຄລາມີເດັຍ, ລາວຈະສັງເກດເຫັນວ່າ:

- ມີການປັ້ນຫຼືເຈັບຢູ່ບໍຣິເວນທ້ອງນ້ອຍ;
- ປະຈຳເດືອນປ່ຽນແປງ (ໝາຍຄວາມວ່າປ່ຽນແປງກ່ຽວກັບເຣື່ອງຣະດູ)
- ຮູ້ສຶກເຈັບເວລາຖ່າຍເບົາ;
- ມີເລືອດອອກຫຼືເຈັບໃນລະຫວ່າງຮ່ວມເພດຫຼືຫຼັງຈາກນັ້ນ;
- ມີຄວາມປ່ຽນແປງເຣື່ອງລົງຂາວ.

**ສຳລັບຜູ້ຊາຍ**

ຖ້າຜູ້ຊາຍມີເຊື້ອຄລາມີເດັຍ, ລາວຈະສັງເກດເຫັນວ່າ:

- ມີໜອງໄຫຼອອກຈາກອະວັຍວະເພດ;
- ຮູ້ສຶກເຈັບເວລາຖ່າຍເບົາ;
- ໝ່ວຍອັນທະໃຄ່ແລະເຈັບ.

**ສຳລັບທັງຍິງແລະຊາຍ**

ອາດຈະເກີດການຕິດເຊື້ອທາງທະວານແຕ່ຕາມປົກກະຕິຈະບໍ່ໄດ້ສັງເກດເຫັນ. ບາງຄັ້ງອາດເຮັດໃຫ້ເຈັບທະວານຫຼືມີໜອງໄຫຼອກມາ.

**ຈະກວດຫາເບິ່ງຄລາມີເດັຍໄດ້ບໍ່?**

ຄລາມີເດັຍສາມາດກວດເບິ່ງໄດ້ໂດຍທ່ານໝໍຂອງທ່ານຫຼືທີ່ຄລີນິກສຸຂພາບທາງເພດ. ທ່ານໝໍຈະຕ້ອຍເອົາຊິ້ນສ່ວນຈາກທໍ່ປັດສະວະ, ປາກມົດລູກ, ຫຼື ທະວານ, ຫຼືນ້ຳປັດສະວະນ້ອຍນຶ່ງ. ຊິ້ນສ່ວນທີ່ຕ້ອຍເອົາ ຫຼື ຕົວຢ່າງຈະຖືກນຳໄປກວດຫາເຊື້ອຄລາມີເດັຍທີ່ຫ້ອງທົດລອງ.

**ຈະປິ່ນປົວຄລາມີເດັຍໂດຍວິທີໃດ?**

ຄລາມີເດັຍສາມາດປິ່ນປົວໄດ້ໂດຍງ່າຍໂດຍການໃຊ້ຢາຕ້ານເຊື້ອ. ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ໄປຫາທ່ານໝໍຂອງທ່ານຫຼືຄລີນິກສຸຂພາບທາງເພດເພື່ອໃຫ້ເພິ່ນກວດເບິ່ງແລະປິ່ນປົວ. ຖ້າຫາກອາການກັບມາເປັນໃໝ່, ໃຫ້ກັບຄືນໄປຫາທ່ານໝໍຫຼືຄລີນິກສຸຂພາບທາງເພດອີກ.

ເປັນສິ່ງສຳຄັນທີ່ທ່ານຕ້ອງກິນຢາຕ້ານເຊື້ອໃຫ້ໝົດຊຸດ, ເຖິງແມ່ນວ່າອາການໄດ້ຫາຍໄປແລ້ວກໍຕາມ, ເພາະວ່າເຊື້ອໂຣກຄລາມີເດັຍອາດຍັງບໍ່ທັນໄດ້ຕາຍໝົດເທື່ອ. ເປັນສິ່ງສຳຄັນເຊັ່ນກັນທີ່ທ່ານຕ້ອງບໍ່ຮ່ວມເພດຢ່າງນ້ອຍ 7 ວັນຫຼັງຈາກການປິ່ນປົວເລີ້ມຕົ້ນ, ເພາະວ່າເຊື້ອພຍາດຍັງສາມາດແຜ່ຜາຍໄດ້ຢູ່.

**ຈະມີອາການແຊກຊ້ອນບໍ?**

ມີ. ຖ້າບໍ່ປິ່ນປົວຄລາມີເດັຍຢ່າງຖືກຕ້ອງ ມັນອາດກໍ່ໃຫ້ເກີດອາການແຊກຊ້ອນຢ່າງຮ້າຍແຮງ.

**ອາການສຳລັບແມ່ຍິງອາການແຊກຊ້ອນມີດັ່ງນີ້:**

- ພາກສ່ວນແຖບທ້ອງນ້ອຍ (ກະໂທ້ຍ) ອັກເສບ (PID). ໝາຍເຖິງເມື່ອອະວັຍວະສືບພັນຊຶ່ງຕັ້ງຢູ່ໃນແຖບທ້ອງນ້ອຍເກີດອັກເສບ;
- ອະວັຍວະພາຍໃນແຖບທ້ອງນ້ອຍເກີດເກາະຕິດກັນ ແລະ ເຈັບແຖບທ້ອງນ້ອຍເຮື້ອຮັງ;
- ເປັນໝັນຍ້ອນທໍ່ຮັງໄຂ່ຖືກທຳລາຍ (ຍ້ອນເຍື່ອຜິວໜັງເປັນແປ້ວ);
- ທ້ອງນອກມົດລູກ (ເມື່ອຖືພາໃນທໍ່ຮັງໄຂ່ແທນທີ່ຈະແມ່ນໃນມົດລູກ).

**ສຳລັບຜູ້ຊາຍອາການແຊກຊ້ອນມີດັ່ງນີ້:**

- ຊ່ອງປັດສະວະອັກເສບທີ່ກັບເປັນຄືນອີກ;
- ໜ່ວຍອັນທະອັກເສບ (ຊຶ່ງກ່ຽວກັບທໍ່ທີ່ໄປຫາໜ່ວຍອັນທະ)

**ສຳລັບຍິງແລະຊາຍ ອາການແຊກຊ້ອນຕ່າງໆມີດັ່ງນີ້:**

- ໂຣກປະດົງ;
- ໂຣກເຍື່ອຫຸ້ມຕາອັກເສບແລະ ໂຣກ uveitis (ຕາອັກເສບ);
- ໂຣກ proctitis (ສຳໄສ້ສຸດອັກເສບ).

**ຄູ່ຮ່ວມເພດຈະຕ້ອງໄດ້ປິ່ນປົວບໍ?**

ແມ່ນແລ້ວ. ຖ້າທ່ານມີເຊື້ອຄລາມີເດັຍ ທ່ານຕ້ອງບອກໃຫ້ຄູ່ຮ່ວມເພດຂອງທ່ານທຸກໆຄົນໃນລະຫວ່າງຫົກເດືອນທີ່ຜ່ານມາ ໃຫ້ເຂົາເຈົ້າໄປຫາໝໍຫຼືຄລີນິກສຸຂພາບທາງເພດເພື່ອກວດເບິ່ງແລະປິ່ນປົວ.

**ຈະປ້ອງກັນໂຣກຄລາມີເດັຍໄດ້ຢ່າງໃດ?**

ການໃຊ້ຖົງອະນາມັຍເມື່ອຮ່ວມເພດທາງອະວັຍວະເພດຫຼືທາງທະວານສາມາດປ້ອງກັນໂຣກຄລາມີເດັຍ ແລະ ໂຣກຕິດຕໍ່ທາງເພດຢ່າງອື່ນ. ການໃຊ້ຖົງອະນາມັຍເປັນສິ່ງສຳຄັນຢ່າງຍິ່ງສຳລັບຜູ້ທີ່ຮ່ວມເພດກັບຫຼາຍກວ່າຄົນນຶ່ງຂຶ້ນໄປ.

## ຣາຍລະອຽດເພີ້ມເຕີມ - ຜແນກສາທາຣະນະສຸກແຫ່ງຣັດ NSW

**1300 066 055** www.health.nsw.gov.au